ສະຖາບັນວິທະຍາສາດສັງຄົມແຫ່ງຊາດ

# ຄຳບູຮານ

(ສຸພາສິດ ຄຳສອນ ຄະຕິທັມ ຜະຫຍາ ຕົງໂຕຍ ສຳນວນ)



ທຸມພັນ ຣັດຕະນະວົງ

ສະຖາບັນຄົ້ນຄວ້າວັດທະນະທຳ

ວຽງຈັນ ພະຈິກ 2007

*ຮິບໂຮມແລະຮຽບຮຽງ: ທຸມພັນ ຣັດຕະນະວົງ*
*ໃຫ້ຄຳປຶກສາ: ທ່ານໄຊຍະສິງ ສີໂຄດຈຸນນະມາລີ ຫົວໜ້າສະຖາບັນຄົ້ນຄ້ວາວັດທະນະທັມ*

*ອຸທິດເປັນກຸສົນເຖິງ: ບິດາ ມານດາ ຊຽງເພັງ ແລະ ສາວແພງ ຣັດຕະນະວົງສ໌*
*ລູກຮັກ ທຸມນິວຽງ(ນຸດ) ຣັດຕະນະວົງສ໌ ຜູ້ລ່ວງລັບ*

*ຂອບໃຈ ນຳທຸກໆທ່ານ ທີ່ໄດ້ໃຫ້ການປະກອບສ່ວນໂດຍທາງກົງ ແລະ ທາງອ້ອມ ໃນໜັງສືເຫຼັ້ມນີ້*

*ຫ້າມພິມຈຳໜ່າຍຕໍ່ມື ໂດຍບໍ່ໄດ້ຮັບອະນຸຍາດ*

*ຮູບປະກອບ: ຮູບແຕ້ມຂອງທ່ານ ເດີລາປອກ 1866-1868*
*ຮູບແຕ້ມຈາກ - ແບບສອນອ່ານ ຊັ້ນພິໂຍ 1930*
*- ສິລະປະລາຍລາວ ໂດຍ ບຸນເລີງ ເວີ້ນວິລາວົງ 1987*
*- ສິລະປະ ລາຍລາວບູຮານຫຼວງພະບາງ ໂດຍ ປີດາ ສະຫວັດວົງ 1988*
*- ແບບສອນອ່ານພາສາລາວ ຊຸມປີ 1960*

*ປະກອບສ່ວນທາງເຕັກນິກ: ສະມາຄົມປົກປັກຮັກສາ ແລະ ພັດທະນາຊິວະນາງພັນ ແບບຍືນຍົງ*

*ພິມເພື່ອການອະນຸຮັກ ແລະ ການຄົ້ນຄ້ວາໂດຍ:* ***ສະຖາບັນຄົ້ນຄ້ວາວັດທະນະທັມ***

*ຂໍຮູ້ບຸນຄຸນເປັນພິເສດຕໍ່ ທ່ານສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມຸນຕີ ຜູ້ປະຈຳການ ແລະ ທ່ານສີເຫຼືອ ບຸນຄໍາ ຫົວໜ້າສະຖາບັນວິທະຍາສາດສັງຄົມແຫ່ງຊາດ ທີ່ໄດ້ໃຫ້ກຳລັງໃຈ ແລະ ສະໜັບສະໜູນການຮຽບຮຽງປຶ້ມຫົວນີ້ດ້ວຍ*



*ຄົນໂງ່ອວດວ່າຕົນສະຫຼາດ*

*ເຂົາຄົນນັ້ນແມ່ນຄົນໂງ່ອີຫຼີ*

*(ພຸທທະພາສິດ)*

## ສາຣະບາລ


1. ຄຳນຳ
2. ຄຳບູຮານ ... 1
3. ຄຳສອນ (ລຸງສອນຫຼານ) 62
4. ຄຳສອນ (ອິນທິຍານສອນລູກ) 77
5. ຄຳສອນ (ປູ່ສອນຫຼານ) 91
6. ຄຳສອນ (ຫຼານສອນປູ່) 104
7. ຄຳໂຄງ ຍອດສຸພາສິດບູຮານ 113
8. ບາທະບາລ 142

## ຄຳນຳ:

ສຸພາສິດ ຄຳສອນ ຄຳພະຫຍາ ຄຳຄົມ ຄຳປິດສະໜາ... ຊຶ່ງມວນຊົນໂດຍທົ່ວໄປ ຮຽກວ່າ 'ຄຳບູຮານ' ນັ້ນ ແມ່ນຜົນງານອະມະຕະປະເພດໜຶ່ງທາງດ້ານວັນນະກັມ ບູຮານ ຊຶ່ງສັງເຄາະມາຈາກພຶດຕິກັມ ແລະ ຊີວິດຕົວຈິງຂອງສັງຄົມ ໃນແຕ່ລະຍຸກ ແຕ່ລະສະໄໝ ຈົນໄດ້ກາຍມາເປັນຄະຕິທັມຄຳສອນ ແລະ ຈັດຈະທັມອັນລ້ຳເລີກ ຝາກໄວ້ເປັນມໍລະດົກຕົກທອດກັນມາ ຕັ້ງແຕ່ຍຸກເດີກດຳບັນຈົນເຖິງທຸກວັນນີ້. ຄວາມຍອດຍິ່ງຂອງຄະຕິທັມຄຳສອນ ຫຼື ຄຳບູຮານນັ້ນ ສະແດງອອກຫຼາຍດ້ານ ດ້ວຍກັນເຊັ່ນ: ການໃຊ້ສຳນວນພາສາໜ້ອຍຄຳ ແຕ່ຄ່ອງກັນ ຟັງມ່ວນ ຈື່ງ່າຍ ໂດຍໃຊ້ພາສາຄວາມເວົ້າງ່າຍໆແບບມວນຊົນ ຈົນເຖິງຄຳປິດສະໜາທີ່ເລິກເຊິ່ງ ຊຶ່ງບາງກໍລະນີ ກໍເຂົ້າໃຈງ່າຍໆໂລດ ແລະ ບາງກໍລະນີ ກໍຈຳເປັນຕ້ອງໄດ້ໃຊ້ສະຕິ ປັນຍາເພື່ອຕີຄວາມໝາຍໃຫ້ໄດ້ຢ່າງແມ່ນຍຳ. ນອກນັ້ນມັນຍັງສະທ້ອນສະພາບ ຄວາມຈິງຂອງຊີວິດສັງຄົມໃນແຕ່ລະຍຸກ ຊຶ່ງເປັນປະໂຫຍດສຳຫຼັບການສຶກສາຄົ້ນ ຄ້ວາໃນດ້ານສັງຄົມສາດ ປະຫວັດສາດ ແລະ ມະນຸດວິທະຍາເປັນຢ່າງດີດ້ວຍ. ຜົນງານການເກັບກຳ ແລະ ຮິບໂຮມຄຳບູຮານຂອງທ່ານ ທຸມພັນ ຣັດຕະນະວົງ ໃນປຶ້ມຫົວນີ້ ເຖິງວ່າທ່ານເອງຈະຖືວ່າ ເປັນສ່ວນນ້ອຍໆໃນຈຳນວນທີ່ຍັງມີຢູ່ກະ ແຈກກະຈາຍກັນຢ່າງຫຼວງຫຼາຍໃນສັງຄົມລາວເຮົາກໍຕາມ ແຕ່ກໍນັບໄດ້ວ່າເປັນ ຄວາມພະຍາຍາມສ່ວນບຸກຄົນທີ່ໜ້າສັນລະເສີນ ເພື່ອອະນຸຮັກມໍລະດົກດ້ານວັນ ນະກັມ ວັດທະນະທັມ ແລະ ສະຕິປັນຍາຂອງບັນພະບູລຸດລາວເຮົາໄວ້ ໃຫ້ຮຸ່ນລູກ ຮຸ່ນຫຼານໄດ້ສຶກສາຄົ້ນຄ້ວາ ແລະ ສືບທອດຕໍ່ໄປ. ໃນນາມຫົວໜ້າສະຖາບັນວິ ທະຍາສາດສັງຄົມແຫ່ງຊາດ ຂ້າພະເຈົ້າເຫັນດີໃຫ້ສະຖາບັນຄົ້ນຄ້ວາວັດທະນະ ທຳ ຈັດພິມຜົນງານນີ້ໄວ້ ເພື່ອເປັນຂໍ້ມູນການຄົ້ນຄ້ວາ ແລະ ເຜີຍແຜ່ທາງວິຊາ ການ ໃຫ້ລູກຫຼານນັກຮຽນນັກສຶກສາ ໄດ້ສືບທອດ ແລະ ເລົ່າຮຽນຕໍ່ໆໄປ.

ວຽງຈັນ ວັນທີ່ 5 ມັງກອນ 2008

ສະຖາບັນວິທະຍາສາດສັງຄົມແຫ່ງຊາດ

ຫົວໜ້າ

[illegible] ບຸນຄຳ

ຍ່ອມຟັດກັນເປັນທັມມະດາ ລີ້ນຟັດແຂ້ວແຂ້ວກໍຟັດລີ້ນດັ່ງນີ້ເປັນຕົ້ນ. ຊາດອື່ນໆ ກໍຕໍານິລາວເຮົາໄດ້ເຊັ່ນກັນ ທັງນີ້ກໍເພື່ອການປັບຕົວເຂົ້າຫາກັນ ແລະ ເພື່ອຄວາມຖືກຕ້ອງປອງດອງ ແລະ ຄວາມຢູ່ຮ່ວມກັນຢ່າງເປັນມິດໄມຕີຕໍ່ກັນ ກໍນັບວ່າເປັນເລື່ອງປົກກະຕິທັມມະດາເຊັ່ນກັນ. ອີກປະການໜຶ່ງທີ່ສໍາຄັນ ແມ່ນເລື່ອງຄວາມເຂົ້າໃຈ ແລະ ການຕີຄວາມໝາຍຂອງບົດ ຖ້າບໍ່ຄົ້ນຄ້ວາ ແລະ ບໍ່ຕີຄວາມໝາຍໄດ້ຢ່າງຖືກຕ້ອງແລ້ວ ກໍຈະໃຫ້ຜົນໄປໃນທາງລົບກໍເປັນໄດ້ ກົງກັນຂ້າມຖ້າຫາກແປຄວາມໝາຍໄດ້ຖືກຕ້ອງດີ ກໍເປັນເລື່ອງສ້າງສັນ ແລະ ມີຄຸນປະໂຫຍດໃນທາງບວກແກ່ກັນ. ຂໍຍົກຕົວຢ່າງ:

''ຂ້າງເສັງພ້າ ຂ້າຫໍ້ເສັງເມືອງ''

*(ສະໄໝກ່ອນໆພຸ້ນ ລາວລົບກັບຫໍ້ ລົບເທື່ອໃດ ກໍເສັງເມືອງໄປນໍາເທື່ອນັ້ນ ຈຶ່ງໄດ້ເກີດມີຄໍາບູຮານນີ້ຂຶ້ນມາສອນໄວ້ວ່າ ຢ່າຂ້າຢ່າເລວກັນອີກທີ່ນັ້ນເອງ)*

ໃນທີ່ສຸດນີ້ ຂໍໃຫ້ ''ພວກຫຼານ'' ເຂົ້າໃຈໄວ້ວ່າ ແຕ່ລະບົດຄໍາສອນນັ້ນ ສາມາດແປໄດ້ຫຼາຍແບບຫຼາຍຢ່າງ ແລະ ອາດຈະແປໄດ້ຫຼາຍຄວາມໝາຍນໍາດ້ວຍແລ້ວແຕ່ຜູ້ຈະແປ ສ່ວນຜູ້ຂ້າເອງ ແປໄດ້ ແຕ່ກໍບໍ່ສາມາດແປໃຫ້ຄົບຖ້ວນໄດ້ໝົດ ສໍາຫຼັບພວກຫຼານໆນັກຮຽນເອງ ການແອບແປ ແລະ ຄວາມພະຍາຍາມເຂົ້າໃຈດ້ວຍຕົນເອງນັ້ນ ລຸງຄິດວ່າຈະເປັນປະໂຫຍດຫຼາຍກວ່າ. ຖ້າບົດໃດບໍ່ເຂົ້າໃຈ ກໍຂໍໃຫ້ເອື້ອຍອ້າຍຄູຊ່ອຍແປໃຫ້ຟັງກໍໄດ້. ສ່ວນຜູ້ທີ່ເປັນນັກສຶກສານັ້ນ ຈະຄົ້ນຄ້ວາຂຽນບົດວິເຄາະເລິກລົງໄປກໍຄົງຈະຖືກໃຈອາຈານບໍ່ໜ້ອຍ ເພາະລາງບົດມີຄວາມໝາຍເລິກ ເຊື່ອງຊ້ອນເປັນປິດສະໜາ ແລະ ເຂົ້າໃຈຍາກເຊັ່ນໂຕຢ່າງ:

'ຢາກກິນເຂົ້າ ໃຫ້ປູກໃສ່ພະລານຫີນ'

*(ຢາກມີຢູ່ມີກິນ ໃຫ້ສ້າງຮາກສ້າງຖານອັນໜາແໜ້ນຂອງຕົນເອງ)*

'ຢາກມີສິນ ໃຫ້ຂ້າພໍ່ຕີແມ່'

*(ໃຫ້ກໍາຈັດ ແມ່ອໍານະທິດທັງປວງທີ່ມີຢູ່ໃນຕົວເຮົາອອກໄປ)*

'ຢາກໃຫ້ພີ່ນ້ອງມາແວ່ ໃຫ້ຂ້າໝູ່ດຽວກັນ...'

*(ຄວາມຄັບແຄບ ເຫັນແກ່ຕົວ ຂີ້ຖີ່ ມັກນ້ອຍກິນດຽວ ນີ້ເອງແມ່ນໝູ່ສະໜິດຂອງເຮົາ)*

' ຢາກມີສີມີວັນ ໃຫ້ນອນດິນເກືອກຝຸ່ນ'

*(ການເຮັດແທ້ທຳຈິງ ການກິ້ງເກືອກລີເລືອ ການຮ່ວມທຸກຮ່ວມສຸກນຳປະຊາຊົນ ມີຄວາມເປັນຮ່ວງເປັນໃຍ ນຳຄວາມທຸກສຸກຂອງປະຊາຊົນ ເຮັດໃຫ້ເກີດສັດທາ ເກີດຄວາມຮັກແພງ ແລະ ຄວາມເຫຼື້ອມໃສຈາກເຂົາເຈົ້າ ນີ້ເອງທີ່ເຮັດໃຫ້ ຄົນເຮົາມີສີມີວັນ)*

' ຢາກອິບອຸ່ນ ໃຫ້ອາບນ້ຳຍາມໜາວ'

*(ການອາບຍາມໜາວໃນຄວາມໝາຍກົງ ກໍໃຫ້ຄວາມອົບອຸ່ນຢູ່ແລ້ວ ແຕ່ໜ້າຈະມີຄວາມໝາຍແພ່ງເຊັ່ນ ຄວາມອົດທົນເອົາຊະນະຄວາມຍາກ ຄວາມລຳບາກໃຫ້ໄດ້ ນີ້ເອງຄືຄວາມອົບອຸ່ນແຫ່ງຊີວິດ)*

' ຢາກກິນປາ ໃຫ້ວ່ານແຫຂັ້ນໂຄກ

ຢາກກິນໄກ່ຜູ້ໂອກ ໃຫ້ສັກສຸ່ມກວມໜອງ'

*(ນີ້ໜ້າຈະໝາຍເຖິງຜູ້ເປັນເຈົ້າບ້ານສະພານເມືອງ ຊຶ່ງຄວນຈະຕ້ອງມີທັດສະນະວິໄສ ແລະ ສາຍຕາອັນກວ້າງໄກ ກວມລວມໄພ່ຟ້າຂ້າແຜ່ນດິນທັງມວນ ຈຶ່ງຈະພາໃຫ້ບ້ານເມືອງມີຢູ່ມີກິນໄດ້)*

ຜູ້ທີ່ບໍ່ສາມາດແປອອກໄດ້ ມັກຈະຕິນັກປາຊບູຮານວ່າ ໂງ່ງ່າວ ທີ່ແທ້ແມ່ນຕົນເອງເປັນຜູ້ບໍ່ຮູ້ກໍບໍ່ວ່າ ເພາະຕົນບໍ່ມີປັນຍາພໍທີ່ຈະແປມັນອອກມາໄດ້. ນີ້ພຽງແຕ່ແມ່ນຕົວຢ່າງໜຶ່ງທໍ່ນັ້ນ ແລະ ສິ່ງທີ່ຍັງຈະພົບເຫັນຕໍ່ໄປ ກໍຄົງຈະຍັງມີຢູ່ຫຼວງຫຼາຍ ຈຶ່ງຂໍໃຫ້ "ພວກຫຼານໆ" ຈົ່ງຂະຫຍັນ ແລະໂຊກດີເທີ້ນ.

ວຽງຈັນ 2/4/2005

ທຸມພັນ ຣັດຕະນະວົງ

## ຄຳແນະນຳ

ທ່ານທີ່ເຄົາລົບ ແລະ ຫຼານໆທີ່ຮັກທັງຫຼາຍ!

ຊາດລາວເຮົາ ມີຄວາມອຸດົມຫຼາຍທາງດ້ານວັນນະກັມຄຳສອນ ຄະຕິ ຄຳຄົມ ຜະຫຍາ ວາດເວົ້າເຊີງວ່າ ແລະ ຕິງໂຕຍ ອັນນັບວ່າເປັນຄັງສົມບັດອັນເລີດລ້ຳ ແລະ ຄວາມເອກອ້າງຂອງຊາດລາວເຮົາບັນດາເຜົ່າໂດຍແທ້. ປູ່ຍ່າຕາຍາຍເຮົາສະໄໝກ່ອນ ໄດ້ໃຊ້ວັນນະກັມຄຳສອນ ຕະຫຼອດລີລາວາດເວົ້າປະເພດຕ່າງໆດັ່ງກ່າວນີ້ ມາອົບຮົມບົ່ມສອນ ແລະ ຫຼໍ່ຫຼອມລູກຫຼານລາວບັນດາເຜົ່າ ໃຫ້ກາຍເປັນຄົນທີ່ພຽບພ້ອມດ້ວຍສະຕິປັນຍາ ແລະ ສຳປະຊັນຍະທີ່ດີ ມີຄວາມຮັກຄວາມສາມັກຄີ ຄວາມເອື້ອເຟື້ອເພື່ອແຜ່ ແລະ ຄວາມອະໄພຍະໂທສົກັມໃຫ້ແກ່ກັນ ແລະ ກັນ ຈົນກາຍເປັນນິໄສຂອງຊາດສັນຕິຊົນ ມັກສະຫງົບ ສູ້ແຂກຄົນ ແລະ ຮູ້ເຄົາລົບຄົນອື່ນ. ປັດຊະຍາຊີວິດ ສຸພາສິດ ຄຳສອນ ແລະ ສິນລະປະຂອງການຖ່າຍທອດ ການເວົ້າຈາປາໄສໃນວົງສັງຄົມນັ້ນ ເປັນສິ່ງວັດແທກອັນໜຶ່ງ ສຳຫຼັບລະດັບຄວາມສີວິໄລ ຄວາມມີມະນຸດສະທັມ ກໍຄື ຄວາມມີອະລິຍະທັມຂອງຊາດໜຶ່ງໆ ພ້ອມກັນນັ້ນ ມັນຍັງເປັນສິ່ງວັດແທກຄວາມມີຄຸນນະວຸດ ລະດັບຄວາມຮູ້ຄວາມມີສົມບັດຜູ້ດີ ຂອງບຸກຄົນພາຍໃນຊາດນັ້ນ ດ້ວຍ.

ຜູ້ຂ້າໄດ້ອິດສາຮົບໂຮມເອົາ ທັງສຸພາສິດ ຄຳສອນ ຕະຫຼອດຄຳຕິງໂຕຍ ແລະ ເຊີງເວົ້າ ເຂົ້າມາໄວ້ນຳກັນ ທັງນີ້ກໍເພາະເຫັນວ່າ ສິ່ງເຫຼົ່ານີ້ລ້ວນແລ້ວແຕ່ໃຫ້ປະໂຫຍດ ແລະ ຄະຕິທັມທີ່ດີທັງນັ້ນ ແລະ ການທີ່ຜູ້ຂ້າໄດ້ຈັດບົດໃຫ້ເປັນລຳດັບໂຕອັກສອນໄວ້ ກໍເພື່ອຄວາມງ່າຍໃນການສະສົມ ແລະ ເພື່ອຫຼີກການຊ້ຳກັນຂອງບົດທີ່ນັ້ນເອງ ນອກຈາກນັ້ນ ກໍເພື່ອໃຫ້ພວກຫຼານສາມາດເຂົ້າເຖິງແຕ່ລະບົດໄດ້ງ່າຍຂຶ້ນ. ອັນໜຶ່ງ ນອກຈາກບົດສຸພາສິດ... ທີ່ມີລັກສະນະໂດດດ່ຽວ ຫຼືເອກະເທດແລ້ວ ລຸງຍັງໄດ້ຄັດຈ້ອນເອົາຄຳສອນເດັ່ນໆ ທີ່ມີຢູ່ໃນກາບ ໂຄງ ແລະ ກອນ ທີ່ເປັນຄຳສອນອະມະຕະ ຂອງບັນດານັກປາຊບູຮານ ມາພິມລົງນຳດ້ວຍ ຊຶ່ງບາງຢ່າງອາດຈະຊ້ຳກັນແດ່ ແລະ ເຂົ້າໃຈຍາກແດ່ກໍເປັນໄດ້ ແຕ່ມັນກໍມີປະໂຫຍດສຳຫຼັບ ຊ່ອຍໃຫ້ພວກເຮົາໄດ້ຮູ້ວ່າ ບົດທີ່ເຮົາຮູ້ ຫຼື ມີຢູ່ນີ້ ມາຈາກກາບ ຫຼື ກອນເລື່ອງໃດ. ຜູ້ຂ້າຂໍອະໄພ ທີ່ໄດ້ຢືມເອົາຕົວສະກົດບາງຄຳ ຕາມຄວາມໝາຍຂອງສັພທ໌ເດີມມາໃສ່ໄວ້ໃນທີ່ນີ້ນຳດ້ວຍເພາະຮູ້ສຶກວ່າ ກະດຽມຄືງອິຫຼືທີ່ເຫັນວ່າ

ເມື່ອຂຽນຄຳໃດຄຳໜຶ່ງລົງໄປແລ້ວ ບໍ່ໄດ້ຄວາມໝາຍທີ່ແນ່ນອນຕາມຄວາມປະສົງ ເພາະສາມາດແປເປັນຢ່າງອື່ນທີ່ມີຄວາມໝາຍກົງກັນຂ້າມໄດ້ ໂດຍສະເພາະໃນໂຄງ ກາບ ກອນ ເປັນຕົ້ນ ທີ່ຕ້ອງໄດ້ໃຊ້ຄຳປ່ຽວສັ້ນໆ ແລະ ຈຳກັດທີ່ສຸດ ແຕ່ຕ້ອງການໃຫ້ໄດ້ຄວາມໝາຍທີ່ແນ່ນອນທີ່ສຸດ ອະທິເຊັ່ນ ຄຳວ່າ ''ສັດ'' ແປວ່າ'' ສັຈ, ສັຈຈະ, ສັຕ, ສັຕວ'' - ''ວິດ'' ແປວ່າ''ວິດຖ່າຍ, ວິສນຸ, ວິທຍຸ, ວິທຍາ'' ແລະອື່ນໆໄດ້ ດັ່ງນີ້ເປັນຕົ້ນ. ແນວໃດກໍດີ ຂໍໃຫ້ພວກເຮົາເອົາເນື້ອໃນຄວາມໝາຍໄວ້ສາກ່ອນ ພາຍຂ້າງໜ້າຄົງຈະມີນັກປາຊ ທາງດ້ານພາສາລາວເຮົາ ມາຊ່ອຍແກ້ໄຂໃຫ້ສົມບຸນ ເໝືອນດັ່ງບັນດານັກປາຊຜູ້ຍິ່ງໃຫຍ່ຂອງພວກເຮົາສະໄໝເກົ່າ ທີ່ສາມາດຄຶດຄົ້ນ ແລະ ປັບປຸງພາສາໃຫ້ພວກເຮົາໄດ້ໃຊ້ທຸກວັນນີ້.

ນອກຈາກນີ້ແລ້ວ ຜູ້ຂ້າຍັງບໍ່ໄດ້ແປຄວາມໝາຍ ແລະ ວິເຄາະເນື້ອໃນຂອງ ແຕ່ລະບົດແຕ່ຢ່າງໃດເລີຍ ທັ້ງນີ້ ກໍຍ້ອນວ່າຢາກໃຫ້ບັນດາລູກຫຼານ ພະຍາຍາມເຂົ້າໃຈດ້ວຍຕົນເອງ ຈະເປັນການດີກ່ວາ. ແນວໃດກໍດີ ຂໍໃຫ້'' ພວກ ຫຼານ'' ເຂົ້າໃຈວ່າ ອັນນີ້ເປັນພຽງແຕ່ຜົນງານການສະສົມ ແລະ ການອະນຸຮັກຄຳບູຮານໄວ້ ເພື່ອການສຶກສາຄົ້ນຄ້ວາເອົາສິ່ງທີ່ດີ ສ່ວນສິ່ງທີ່ບໍ່ດີທີ່ຄວນລະເວັ້ນນັ້ນ ກໍເອົາໄວ້ເປັນບົດຮຽນໃຫ້ແກ່ຕົນເອງເປັນຈຸດໜັກ ດັ່ງນັ້ນຈຶ່ງບໍ່ໄດ້ຄັດເລືອກ ແລະ ແປງສັພທ໌ໃຫ້ທັນສະໄໝແຕ່ປະການໃດ ຊຶ່ງຈະໃຫ້ຖືກກັບຄວາມມັກຂອງບຸກຄົນທັງໝົດນັ້ນ ຍ່ອມເປັນໄປໄດ້ຍາກ. ອັນນີ້ກໍຄົງຈະເປັນທີ່ເຂົ້າໃຈກັນດີສຳຫຼັບພວກຫຼານ ເພາະວ່າ ສຸພາສິດບູຮານ ຫຼື ຄຳບູຮານນັ້ນ ແມ່ນສິ່ງທີ່ກັ່ນຕອງ ແລະ ສັງເຄາະມາຈາກພຶດຕິກັມຕົວຈິງຫຼາຍຫຼີບຫຼາຍຕ່າວ ຈົນກາຍເປັນສັດຈະທັມສຳຫຼັບທຸກຄົນ. ທຸກຄົນ ຕະຫຼອດທຸກຊາດທຸກພາສາ ຊຶ່ງນອກຈາກຄຸນຄວາມດີ ທີ່ຕົນໄດ້ມີແກ່ສັງຄົມແລ້ວ ກໍບໍ່ອາດສາມາດຫຼີກອອກຈາກ ຄວາມຂາດຕົກບົກຜ່ອງໃດໜຶ່ງທີ່ຕົນໄດ້ກະທຳມາໄດ້ເລີຍ ດັ່ງນັ້ນຈຶ່ງຮູ້ສຶກພໍໃຈ ຫຼື ບໍ່ພໍໃຈ ເມື່ອເຫັນວ່າຄຳບູຮານນັ້ນພໍດີຖືກກັບກໍລະນີຂອງໂຕເອງ. ລາງສັພທ໌ທີ່ມີຢູ່ໃນບົດຕ່າງໆ ອາດຈະເຫັນວ່າເຣິະໃນຍຸກຂອງສັງຄົມລາວປັດຈຸບັນ ແຕ່ສຳຫຼັບຍຸກກ່ອນແລ້ວ ຄົນບູຮານຖືເປັນທັມມະດາ. ການໃຊ້ສັພທ໌ປະເພດທີ່ວ່າມານີ້ ອັນດີຂອງມັນກໍແມ່ນການເວົ້າຫຼ້ອນເວົ້າໃຫ້ເຖິງທີ່ສຸດອິຫຼີ ເພື່ອໃຫ້ຄົນຈື່ໄດ້ດີ ແລະ ຈື່ໄດ້ຕະຫຼອດໄປ ອັນນັບວ່າແມ່ນສິນລະປະຮູບແບບໜຶ່ງ ທີ່ຄວນຈະຮູ້ໄວ້ເປັນບົດຮຽນ ແລະ ຄວນຮັບຮອງເອົາໄດ້. ລາງບົດກໍສຽດສີ ແລະ ຕຳນິສັງຄົມຕົນເອງ ລາງບົດກໍຕຳນິພີ່ນ້ອງບ້ານໃກ້ ເຮືອນຄຽງໄປພ້ອມກັນ ອັນນີ້ກໍບໍ່ແມ່ນເລື່ອງປະຫຼາດແຕ່ຢ່າງໃດ ແຂ້ວກັບລີ້ນຢູ່ນຳກັນກໍ

# ຄຳບູຮານ

(ສຸພາສິດ ຄຳສອນ ຄະຕິທັມ ຄຳຄົມ ຜະຫຍາ ເຊີງ ຕົງໂຕຍ ສຳນວນ)

---------

## ກ

ກະຕ່າຍ ຕື່ນໝາກຕູມ

ກະທິນຈໍ້ກົກ (ກະທິນຈໍ້ປາຍ)

ກັນດີກ່ວາແກ້ ແຮດີກ່ວາລົ້ວ

ກາກິນປີງ ໄປຄາຄໍ່ແຮ້ງ
ເຮືອຂຶ້ນແກ້ງ ໄປຫລົ້ມກາງດົງ

ກາງຄືນເປັນເຫງັນ ກາງເວັນເປັນນົກເຄົ້າ

ກາງສ້ອນ ເອົາລົມ

ເກັບປູໃສ່ກະດົ້ງ

ກວາງກິນຫມາກຂາມປ້ອມ ໄປຄາກົ້ນຂີ້ມັ່ງ
ມັ່ງຂີ້ບໍ່ໄດ້ ສາມມື້ກະຕ່າຍຕາຍ

ກິນນ້ຳ ຄະລຳຕ່ອນ

ກິນສົມຢາກ ປາກສົມຄຽດ

ກິນພວມຮ້ອນ  ຟ້ອນພວມເມົາ

ກິນຄືໝູ  ນອນຄືໝາ

ກິນແລ້ວລືມໜີ້ ຂີ້ແລ້ວລືມຂອນ

ກິນມ່ຳໆ ບໍ່ຄະລຳຫາທ້ອງ

ກິນຫອຍເຂົ້າຍັງ ກິນໜັງເຂົ້າໜົດ

ກິນຫຼາຍທ້ອງແຕກ  ແບກຫຼາຍຫຼັງຫັກ

ກິນປູນຮ້ອນທ້ອງ

ກິນກ້ວຍຍາກປອກ

ກິນເຂົ້າໂຕ  ຢ່າໂສຄວາມເພິ່ນ

ກິນເຂົ້າຜີ  ຟັງຄວາມຜີ

ກິນເຂົ້າລີງ

ກິນລາບເຮືອນເພິ່ນ  ບໍ່ທໍ່ກິນແຈ່ວເຮືອນໂຕ

ກິນຕາງລີ້  ຂີ້ຕາງເຊົາ

ກິນແຕ່ເຫຼົ້າ  ເມົາແຕ່ເບັ້ງ
ປານໄດ້ ໝື່ນເມັງ

ກົກບໍ່ເຕື້ອງ ຕີງຕາຍຕັ້ງແຕ່ງ່າ
ງ່າບໍ່ເຕື້ອງ ມາເຫຼືອງຕັ້ງແຕ່ໃບ

ກົ້ນດໍາ ຫໍາຈຸ່ມ

ກົບຕາຍຍ້ອນປາກ ຄັນຄາກຕາຍຍ້ອນສຽງ

ກົບຂຽດຮ້ອງ ຕ້ອງຫິວໃຈງູ
ສາວຂູຊາຍ ເສັຽດາຍແຕ່ຕ້າງ
ເປັນແມ່ຮ້າງ ເຂົາຫມັ່ນຖາມຫາ

ແກ້ຜ້າ ເອົາຫນ້າລອດ

ແກ້ວບໍ່ຜັດ ສາມປີເປັນແຮ່
ພີ່ນ້ອງບໍ່ແວ່ ສາມປີເປັນອື່ນ

ກັງງປານຫນ້າກອງໄຊ

ກັງງນອກ ບໍ່ດອກໃນ

ກັງງແຕ່ນອກ ທາງໃນເປັນຫມາກເດື່ອ

ກັງງລ້ອຍຊ້ອຍ ສະເໝີໄຂ່ຮອງຈານ

ກັງງລ້ອຍຊ້ອຍ ນໍ້າອ້ອຍທີ່ຕອງບອນ

ກ່ອງເຂົ້ານ້ອຍ ຂ້າແມ່ຍັງເປັນ

ເກົ່າເພິ່ນ ໃຫມ່ເຮົາ

ເກົ້າອິດເກົ້າເຍື້ອນ ຫາກຈິໄດ້ຕ່ອນຄໍາ

ກໍາຂີ້ ດີກ່ວາກໍາຕົດ

ກໍາ ສະຫນອງກໍາ

ກວນນໍ້າ ໃຫ້ປາງອມ

ກໍາພ້າ ຊາກຈວບນໍ້ນົມ

ໄກ່ກະຕາກກ່ອນໄຂ່

ໄກ່ເຫັນຕີນງູ ງູເຫັນນົມໄກ່

ໄກ່ງາມຍ້ອນຂົນ ຄົນງາມຍ້ອນແຕ່ງ



*ໄກ່ງາມຍ້ອນຂົນ ຄົນງາມຍ້ອນແຕ່ງ*

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ